# ZIKA



## ປ້ອງກັນຕົວເອງເພື່ອປ້ອງກັນຄົນອື່ນ

## ສາມາດຖືກແຜ່ກະຈາຍໄດ້ແນວໃດ

ຊິກາແມ່ນພະຍາດໄວລັສທີ່ແຜ່ກະຈາຍຈາກຍຸງຫຼືຄົນໄດ້





### ຈາກຍຸງສູ່ຄົນ:



### ຈາກຄົນສູ່ຍຸງ:



### ຈາກຄົນສູ່ຄົນ:



## ອາການພົບພໍ້ຫລາຍມີຫຍັງແດ່



ມີໄຂ້ ຜື່ນຄັນ ເມື່ອຍຂໍ້ຕໍ່ ຕາແດງ

ເຈົ້າອາດມີອາການເຫລົ່ານີ້ບໍ່ດົນປານໃດ, ຫຼືບາງຄົນທີ່ຕິດຊິກາອາດບໍ່ສະແດງອາການອັນໃດເລີຍກໍ່ໄດ້.

**ໃຫ້ເຈົ້າປຶກສາຫາລືກັບທ່ານຫມໍກ່ຽວກັບການກວດຊິກາຖ້າຫາກ:**

- ເຈົ້າມີອາການຊິກາ ຫຼື ເຈົ້າຖືພາແລະເຈົ້າຫຼືຄູ່ຂອງ/
- ເຈົ້າໄດ້ເດີນທາງໄປບ່ອນທີ່ມີຊິກາ



## ຖ້າຫາກເຈົ້ຕິດຊິກາຈະເກີດຫຍັງຂື້ນ

ຊິກາບໍ່ໄດ້ມີຜົນກະທົບກັບທຸກຄົນ. ແຕ່ສໍາລັບບາງຄົນ, ຜົນສາມາດຮ້າຍແຮງຫລາຍທີ່ສຸດ.

### ທາລົກທີ່ຍັງບໍ່ທັນໄດ້ເກີດ

ທາລົກສາມາດຕິດເຊື້ອຊິກາກ່ອນເກີດໄດ້. ທາລົກທີ່ຕິດຊິກາອາດເປັນພະຍາດຫົວເລັກໄດ້, ຊຶ່ງໝາຍຄວາມວ່າຫົວແລະສະໝອງຂອງທາລົກຈະເລັກເກີນຄາດ. ຊິກາສາມາດມີຜົນກະທົບຕໍ່ການໄດ້ຍິນ, ສະໝອງ, ແລະການເຕີບໃຫຍ່ຂອງທາລົກໄດ້.



### ຜູ້ໃຫຍ່

ເມື່ອຜູ້ໃຫຍ່ຕິດຊິກາ, ມີໂອກາດທີ່ເສັ້ນປະສາດອາດເສຍຫາຍໄດ້, ຊຶ່ງອາດມີຜົນເຮັດໃຫ້ກ້າມຮູ້ສຶກອ່ອນເພຍ ຫຼື ເຫນັບຊາ. ແລ້ວຊິກາຍັງສາມາດເຮັດໃຫ້ເປັນອໍາມະພາດໄດ້, ຊຶ່ງໝາຍຄວາມວ່າຈະບໍ່ສາມາດເຄື່ອນໄຫວບາງສ່ວນຂອງຮ່າງກາຍ.





TRANSLATED BY: ASIAN TRANSLATION SERVICE



Copyright © 2016, MAGNUS, Walnut, CA

## ຖ້າເຈົ້າຕິດຊິກາ

***ສາມາດປິ່ນປົວ ຫຼື ຮັກສາໃຫ້ຫາຍຈາກ*** ຊິກາ ໄດ້.
ເດັກອາຍຸຕ່ຳກວ່າ 18 ປີຄວນໄປຫາທ່ານໝໍ.
ຖ້າຫາກເຈົ້າແມ່ນຜູ້ໃຫຍ່ທີ່ຕິດຊິກາ ທ່ານສາມາດຊ່ວຍໃຫ້ຮ່າງກາຍຮູ້ສຶກດີຂຶ້ນໄດ້ໂດຍ:

**ພັກຜ່ອນຫລາຍ**




**ກິນນ້ຳຫລາຍ**




**ກິນຢາ (ຢາ acetamenophen) ຖ້າຫາກມີໄຂ້ ຫຼື ເມື່ອຍ**



## ປ້ອງກັນໄດ້ແນວໃດ

ປັດຈຸບັນນີ້ ***ບໍ່ມີຢາວັກຊີນ*** ເພື່ອປ້ອງກັນຊິກາ. ດັ່ງນັ້ນ, ວິທີທີ່ດີທີ່ສຸດໃນການປ້ອງກັນຊິກາແມ່ນການປ້ອງກັນຕົນເອງແລະຄົນອື່ນ. ຂັ້ນຕອນທີ່ເຈົ້າເຮັດໄດ້ຮວມເຖິງ:

**ໃຊ້ຢາກັນຍຸງທີ່ມີ DEET**




**ໃສ່ເສື້ອແຂນຍາວແລະໂສ້ງຂາຍາວ**



- ຫລີກເວັ້ນຈາກການເດີນທາງໄປບ່ອນຕ່າງ ທີ່ມີຊິກາ
  - ☑ http://wwwnc.cdc.gov/travel/page/zika-information
- ຫລີກເວັ້ນຈາກການແຜ່ກະຈາຍຊິກາຜ່ານເພດສຳພັນ
  - ☑ ໃຊ້ຖົງຢາງອະນາໄມ ຫຼື
  - ☑ ລໍຖ້າໃຫ້ມີເພດສຳພັນຫລັງຈາກເດີນທາງໄປບ່ອນທີ່ມີຊິກາ ເຖິງແມ້ວ່າເຈົ້າບໍ່ມີອາການຊິກາກໍຕາມ
    - ແມ່ຍິງ - ໃຫ້ລໍ 8 ອາທິດຫຼັງອອກຈາກພື້ນທີ່ຊິກາ
    - ຜູ້ຊາຍ - ໃຫ້ລໍ 6 ເດືອນຫຼັງອອກຈາກພື້ນທີ່ຊິກາ



### ຈື່ຈຳໄວ້ວ່າ

ເຈົ້າອາດຕິດຊິກາໂດຍບໍ່ຮູ້ຕົວໄດ້.
ປ້ອງກັນຕົວເອງເພື່ອປ້ອງກັນຄົນອື່ນ.
ປຶກສາຫາລືທ່ານໝໍຖ້າຫາກເຈົ້າມີຂໍ້ສົງໃສ.

- ຢ່າໃຫ້ຍຸງເຂົ້າມາໃນເຮືອນຂອງເຈົ້າ. ຂໍຄຳແນະນຳເພີ່ມເຕີມອີກຈາກທ່ານໝໍຂອງເຈົ້າໄດ້.

**ປິດປະຕູແລະໜ້າຕ່າງ**



**ໃຊ້ມຸ້ງລວດເມື່ອເປີດປະຕູແລະໜ້າຕ່າງ**



**ຮັກສາສິ່ງຂອງຕ່າງໆ ທີ່ອາດເກັບນ້ຳ (ເຊັ່ນ ກະຖາງຕົ້ນໄມ້ແລະຢາງລົດເກົ່າ) ໃຫ້ແຫ້ງແລະສະອາດ**




Copyright © 2016, MAGNUS, Walnut, CA